## ຮອງປະທານສະພາແຫ່ງຊາດ ລົງຊີ້ນຳວຽກງານຢູ່ແຂວງ ບໍລິຄຳໄຊ.



*(ປຊຊ): ຕອນເຊົ້າວັນທີ 26 ສິງຫາ 2010 ຜ່ານມານີ້ ທ່ານ ນາງ ປານີ ຢາທໍ່ຕູ້ ກຳມະການກົມການເມືອງ ສູນກາງພັກ, ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 11 ບໍລິຄຳໄຊ ໄດ້ລົງຊີ້ນຳວຽກງານ ຢູ່ແຂວງ ບໍລິຄຳໄຊ ໂດຍການຕອນຮັບຂອງທ່ານ ບ້ານ ນ້ອຍມະນີ ເລຂາພັກ ແຂວງ ເຈົ້າແຂວງບໍລິຄຳ ໄຊ ພ້ອມດ້ວຍຄະນະ. ທ່ານ ນາງ ປານີ ຢາທໍ່ຕູ້ ໄດ້ໄປຢ້ຽມຢາມ ແລະ ພົບປະໂອ້ລົມພະນັກງານການນຳ, ພະນັກ ງານຫຼັກແຫຼ່ງຢູ່ເມືອງປາກກະດິງ, ເຊິ່ງໄດ້ຮັບຟັງການລາຍສະພາບການ ຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມຂອງເມືອງປາກກະດິງ ຈາກທ່ານ ຄຳຫຼ້າ ອູມາລີ ກຳມະການພັກແຂວງ-ເລຂາພັກເມືອງ ເຈົ້າເມືອງປາກກະດິງ.

ທ່ານ ນາງ ປານີ ຢາທໍ່ຕູ້ ຕີລາຄາສູງຕໍ່ຜົນງານຫຼາຍດ້ານທີ່ເມືອງຍາດມາໄດ້ໃນ 1ປີ ຜ່ານມາ ເຊັ່ນ: ຮັກສາໄດ້ຄວາມສະຫງົບ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດສືບຕໍ່ຂະຫຍາຍໂຕຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະ ຊາຊົນບັນດາເຜົ່າດີຂຶ້ນເປັນກ້າວໆ. ພ້ອມນີ້ທ່ານ ໄດ້ຮຽກຮ້ອງໃຫ້ເມືອງດັ່ງກ່າວ ຈົ່ງສືບຕໍ່ຊີ້ນຳໆພາປະຊາຊົນບັນດາເຜົ່າ ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ບັນລຸຕາມຄາດໝາຍ 2011-2015, ເອົາໃຈໃສ່ຕໍ່ວຽກງານການສຶກສາ, ສາທາລະນະສຸກເປັນຕົ້ນຕໍ່, ເຊິ່ງໃນສົກປີ 2011-2015 ນີ້ ສະພາແຫ່ງຊາດໄດ້ລົງທຶນເຂົ້າໃນການສຶກສາ 17%, ສາທາລະນະສຸກ 9% ແລະ ອື່ນໆ, ຈາກນັ້ນທ່ານໄດ້ເຄື່ອນໄຫວຢ້ຽມຢາມກຸ່ມບ້ານພັດທະນາປາກທອນ ແລະກຸ່ມບ້ານພັດທະນາທົ່ງນາມີ.